ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ ໐໐໑/ສນຊ

ສູນກາງແນວລາວສ້າງຊາດ

ນະຄອນຫຼວງວຽງຈັນ, ວັນທີ ໐໗/໐໑/໒໐໒໐

# ຄຳແນະນຳ

## ກ່ຽວກັບ ການຈັດຕັ້ງປະຕິບັດ
## ກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ

- **ອີງຕາມ ມະຕິຕົກລົງ ຂອງກົມການເມືອງສູນກາງພັກ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນກາງແນວລາວສ້າງຊາດ ສະບັບເລກທີ 029/ກມສພ, ລົງວັນທີ 28 ທັນວາ 2017,**
- **ອີງຕາມ ກົດໝາຍ ວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ, ເລກທີ 49/ສພຊ, ລົງວັນທີ 20 ມິຖຸນາ 2018;**

ແນວລາວສ້າງຊາດ ແມ່ນອົງການຈັດຕັ້ງລຳພັນທາງການເມືອງ ຂອງທົ່ວສັງຄົມ, ເປັນສະຫະພັນ ຂອງ ອົງການຈັດຕັ້ງການເມືອງ, ອົງການຈັດຕັ້ງການເມືອງ-ສັງຄົມ, ອົງການຈັດຕັ້ງສັງຄົມ ແລະ ບຸກຄົນທີ່ເປັນຕົວແທນໃຫ້ແກ່ຊົນຊັ້ນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງຕົວແທນຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ບົນພື້ນຖານຄວາມຕື່ນຕົວ ແລະ ສະໝັກໃຈ. ແນວລາວສ້າງຊາດ ແມ່ນພາກສ່ວນໜຶ່ງ ໃນລະບົບການເມືອງ ແຫ່ງ ສປປ ລາວ ໂດຍແມ່ນພັກປະຊາຊົນປະຕິວັດລາວ ເປັນແກນນຳ ທັງເປັນພື້ນຖານການເມືອງໜຶ່ງ ຂອງ ລະບອບປະຊາທິປະໄຕປະຊາຊົນ. ແນວລາວສ້າງຊາດ ສືບທອດ ແລະ ເສີມຂະຫຍາຍມູນເຊື້ອອັນສະຫງ່າລາສີ ຂອງແນວລາວອິດສະລະ ແລະ ແນວລາວຮັກຊາດ ຊຶ່ງໄດ້ເຕົ້າໂຮມຄວາມສາມັກຄີປະຊາຊົນລາວບັນດາເຜົ່າ ເຂົ້າໃນການຕໍ່ສູ້ກູ້ຊາດໃນເມື່ອກ່ອນ ແລະ ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນປັດຈຸບັນ.

ແນວລາວສ້າງຊາດ ມີພາລະບົດບາດ ສ້າງ, ປັບປຸງກຳລັງແຮງທົ່ວປວງຊົນ ແລະ ເປັນຄັນທຸງເຕົ້າໂຮມຄວາມສາມັກຄີປອງດອງປະຊາຊົນລາວບັນດາເຜົ່າ; ສຶກສາອົບຮົມ, ປຸກລະດົມ ປະຊາຊົນລາວບັນດາເຜົ່າເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ເສີມຂະຫຍາຍສິດເປັນເຈົ້າໃນການປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ; ຕິດຕາມ ກວດກາ, ສ່ອງແສງມານະຈິດ, ຄວາມມຸ່ງມາດປາຖະໜາ ແລະ ຄວາມຄິດຄວາມເຫັນ ຂອງປະຊາຊົນລາວບັນດາເຜົ່າ; ເປັນໃຈກາງປະສານສົມທົບກັບພາຄີ ຂອງຕົນ.

ກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ ໄດ້ຖືກພິຈາລະນາຮັບຮອງໃນຕອນບ່າຍ ຂອງ ວັນທີ 20 ມິຖຸນາ 2018 ໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ໂດຍມີສະມາຊິກສະພາແຫ່ງຊາດ ເຂົ້າຮ່ວມກອງປະຊຸມທັງໝົດ 116 ທ່ານ, ດ້ວຍຄະແນນເຫັນດີ 95 ທ່ານ ເທົ່າກັບ 91%, ບໍ່ເຫັນດີ 9 ທ່ານ ເທົ່າກັບ 8%, ບໍ່ອອກສຽງ 1 ທ່ານ ເທົ່າກັບ 1% ແລະ ສະມາຊິກສະພາແຫ່ງຊາດ ໄດ້ປະກອບຄຳເຫັນ ຈຳ

ນອນ 11 ທ່ານ. ກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ ໄດ້ຮັບການປະກາດໃຊ້ ຕາມລັດຖະດຳລັດ ຂອງ ປະທານປະເທດ ແຫ່ງ ສປປ ລາວ ເລກທີ 208/ປປທ, ລົງວັນທີ 06 ສິງຫາ 2018.

ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານ ທັງເປັນການສ້າງຄວາມຮັບຮູ້ເຂົ້າໃຈເລິກເຊິ່ງ ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ ໃຫ້ເຂົ້າສູ່ຊີວິດຕົວຈິງສັງຄົມ, ເປັນບ່ອນ ອີງໃຫ້ການຈັດຕັ້ງແນວລາວສ້າງຊາດທຸກຂັ້ນໃນການເຄື່ອນໄຫວວຽກງານແນວໃໝ່ ເນື່ອງຈາກກົດໝາຍດັ່ງກ່າວ ມີ ບາງພາກ, ບາງມາດຕາ ມີຄວາມຈຳເປັນຕ້ອງໄດ້ອະທິບາຍໃຫ້ຈະແຈ້ງຂຶ້ນຕື່ມ ດ້ວຍການອອກຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ ໃຫ້ມີຄວາມເປັນເອກະພາບໃນທົ່ວປະ ເທດ.

**ປະທານ**

**ຄະນະກຳມະການສູນກາງແນວລາວສ້າງຊາດ ອອກຄຳແນະນຳ:**

## I. ຈຸດປະສົງ

ຄຳແນະນຳສະບັບນີ້ ອະທິບາຍເພີ່ມເຕີມ ເນື້ອໃນ ບາງພາກ ແລະ ບາງມາດຕາ ຂອງກົດໝາຍວ່າດ້ວຍ ແນວລາວສ້າງຊາດ ສະບັບເລກທີ ເລກທີ 49/ສພຊ, ລົງວັນທີ 20 ມິຖຸນາ 2018 ເພື່ອໃຫ້ມີຄວາມລະອຽດ ແລະ ຈະແຈ້ງຂຶ້ນຕື່ມ; ໃຫ້ມີຄວາມຮັບຮູ້ເຂົ້າໃຈໃນການນຳໃຊ້ ແນ່ໃສ່ເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍສະບັບນີ້ຖືກ ຕ້ອງ, ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

## II. ການອະທິບາຍເພີ່ມຕື່ມເນື້ອໃນຄຳສັບຂອງບາງມາດຕາ

ກົດໝາຍ ວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ ປະກອບມີ 13 ພາກ, 4 ໝວດ, 63 ມາດຕາ ໃນນີ້ ຈະໄດ້ແນະນຳເນື້ອໃນ ບາງມາດຕາ ທີ່ຢູ່ໃນພາກ ແລະ ໝວດ ຂອງກົດໝາຍດັ່ງກ່າວ, ລາຍລະອຽດ ມີດັ່ງນີ້:

### 1. ພາກທີ II ແນວລາວສ້າງຊາດ, ໝວດທີ 2 ລະບົບການຈັດຕັ້ງ, ໂຄງປະກອບກົງຈັກການ ຈັດຕັ້ງ ແລະ ບຸກຄະລາກອນ ຂອງແນວລາວສ້າງຊາດ

### 1.1. ມາດຕາ 11 ໂຄງປະກອບກົງຈັກການຈັດຕັ້ງ ຂອງແນວລາວສ້າງຊາດ

ໂຄງການປະກອບກົງຈັກການຈັດຕັ້ງ ຂອງແນວລາວສ້າງຊາດ ແຕ່ລະຂັ້ນ ບັນຫາລວມ ແມ່ນຂຶ້ນກັບ ສະພາບຄວາມເປັນຈິງໃນແຕ່ລະໄລຍະໂດຍເບິ່ງບັນຫາເສດຖະກິດ, ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ບັນຫາສະເພາະ ຂັ້ນທ້ອງຖິ່ນ ແມ່ນຂຶ້ນກັບຈຳນວນປະຊາກອນ, ຊົນເຜົ່າ, ຊົນເຜົ່າ, ສາສະໜາ ເຊິ່ງໂຄງປະກອບ ກົງຈັກການຈັດຕັ້ງ ຈະກຳນົດແຕກຕ່າງກັນ ໂດຍພື້ນຖານ ໂຄງປະກອບກົງຈັກການຈັດຕັ້ງ ສູນກາງ ແລະ ທ້ອງຖິ່ນ ແມ່ນກຳນົດ:

#### 1.1.1.ສູນກາງແນວລາວສ້າງຊາດ ປະກອບມີ 8 ກົມ ແລະ ທຽບເທົ່າຄື:

1. ຫ້ອງການ;
2. ກົມຈັດຕັ້ງ;
3. ກົມກວດກາ;
4. ກົມໂຄສະນາ;
5. ກົມຊົນເຜົ່າ;
6. ກົມສາສະໜາ;

7. ກົມຊົນເຜົ່າ-ກາບຈັດຕັ້ງສັງຄົມ;

8. ສູນຝຶກອົບຮົມ.

ໃນກໍລະນີ ທີ່ມີຄວາມຈຳເປັນ ອາດຈະສ້າງຕັ້ງກົງຈັກການຈັດຕັ້ງອື່ນ ຂຶ້ນອີກກໍໄດ້ ຕາມການຕົກລົງ ຂອງຄະນະປະຈຳສູນກາງແນວລາວສ້າງຊາດ ໂດຍຜ່ານການເຫັນດີ ຂອງກະຊວງພາຍໃນ ແລະ ຄະນະເລຂາທິການສູນກາງພັກ.

ນອກຈາກນີ້, ສູນກາງແນວລາວສ້າງຊາດ ຍັງໄດ້ສ້າງກົງຈັກຊ່ວຍວຽກ ທີ່ບໍ່ປະຈຳການຂຶ້ນ ເອີ້ນວ່າ ຄະນະທີ່ປຶກສາສູນກາງແນວລາວສ້າງຊາດ ຊຶ່ງມີພາລະບົດບາດໃນການຄົ້ນຄວ້າ, ປະກອບຄຳເຫັນຊ່ວຍປະທານ, ຮອງປະທານ ແລະ ຄະນະປະຈຳ ສູນກາງແນວລາວສ້າງຊາດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຊົນເຜົ່າ, ວຽກງານສາສະໜາ, ວຽກງານຊົນຄົນ ແລະ ອົງການຈັດຕັ້ງສັງຄົມ, ວຽກງານພົວພັນຄົນເຊື້ອຊາດລາວທີ່ດຳລົງຊີວິດຢູ່ຕ່າງປະເທດ, ວຽກງານເສດຖະກິດ ແລະ ກົດໝາຍ ຕາມສິດ ແລະ ໜ້າທີ່ ຂອງສູນກາງແນວລາວສ້າງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ.

ຄະນະທີ່ປຶກສາສູນກາງແນວລາວສ້າງຊາດ ແຕ່ລະຄະນະ ປະກອບດ້ວຍ ປະທານ, ຮອງປະທານ 1 ຫາ 2 ທ່ານ, ຄະນະ 9 ຫາ 15 ທ່ານ ຊຶ່ງມາຈາກກຳມະການສູນກາງແນວລາວສ້າງຊາດ ທີ່ບໍ່ປະຈຳການ, ນັກປັນຍາຊົນ, ຜູ້ຊົງຄຸນວຸດທິ, ຜູ້ຊ່ຽວຊານ, ນັກວິທະຍາສາດ, ນັກທຸລະກິດ ແລະ ອື່ນໆ ປັດຈຸບັນຄະນະທີ່ປຶກສາສູນກາງແນວລາວສ້າງຊາດ ປະກອບມີ ຄະນະທີ່ປຶກສາວຽກງານຊົນເຜົ່າ, ຄະນະທີ່ປຶກສາວຽກງານສາສະໜາ, ຄະນະທີ່ປຶກສາວຽກງານຊົນຄົນ ແລະ ອົງການຈັດຕັ້ງສັງຄົມ, ຄະນະທີ່ປຶກສາວຽກ ງານພົວພັນຄົນເຊື້ອຊາດລາວທີ່ດຳລົງຊີວິດຢູ່ຕ່າງປະເທດ ແລະ ຄະນະທີ່ປຶກສາວຽກງານເສດຖະກິດ ແລະ ກົດ ໝາຍ.

**1.1.2.ແນວລາວສ້າງຊາດແຂວງ, ນະຄອນຫຼວງ ປະກອບມີ 5 ຂະແໜງ ຄື:**

1. ຂະແໜງບໍລິຫານ-ຈັດຕັ້ງ;
2. ຂະແໜງກວດກາ;
3. ຂະແໜງໂຄສະນາ;
4. ຂະແໜງສາສະໜາ;
7. ຂະແໜງຊົນເຜົ່າ-ຊົນຄົນ-ການຈັດຕັ້ງສັງຄົມ.

**1.1.3.ແນວລາວສ້າງຊາດເມືອງ-ນະຄອນ, ເທດສະບານ ປະກອບມີ 3 ໜ່ວຍງານ ຄື:**

1. ໜ່ວຍງານບໍລິຫານ-ຈັດຕັ້ງ-ໂຄສະນາ;
2. ໜ່ວຍງານກວດກາ;
3. ໜ່ວຍງານສາສະໜາ-ຊົນເຜົ່າ-ຊົນຄົນ-ການຈັດຕັ້ງສັງຄົມ.

**1.1.4. ແນວລາວສ້າງຊາດຂັ້ນບ້ານ**

ແນວລາວສ້າງຊາດຂັ້ນບ້ານ ແມ່ນການຈັດຕັ້ງໜຶ່ງຄືກັນກັບບັນດາອົງການຈັດຕັ້ງອື່ນໆ ຂອງບ້ານ.

ໂດຍອີງໃສ່ສະພາບ ແລະ ເງື່ອນໄຂຕົວຈິງ ຂອງແນວລາວສ້າງຊາດແຕ່ລະຂັ້ນ ສາມາດສ້າງຕັ້ງຄະນະທີ່ປຶກສາ ແລະ ຄູ່ຮ່ວມງານຂັ້ນຂອງຕົນຂຶ້ນ ຊຶ່ງເປັນກົງຈັກທີ່ບໍ່ປະຈຳການ ມີພາລະບົດບາດໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຊ່ວຍປະທານ, ຮອງປະທານ ຕໍ່ວຽກງານແນວລາວສ້າງຊາດ ໃຫ້ມີປະສິດທິຜົນສູງ ໂດຍແມ່ນປະທານຄະນະກຳມະການແນວລາວສ້າງຊາດຂັ້ນນັ້ນ ເປັນຜູ້ແຕ່ງຕັ້ງ ໂດຍຜ່ານການເຫັນດີຂອງຄະນະພັກ, ຄະນະປະຈຳ ຂັ້ນຂອງຕົນ.

**1.2. ມາດຕາ 12 ໂຄງປະກອບບຸກຄະລາກອນ ຂອງແນວລາວສ້າງຊາດ**

ໃນກົດໝາຍ ວ່າດ້ວຍແນວລາວສ້າງຊາດສະບັບກ່ອນ ບໍ່ໄດ້ກຳນົດຄະນະປະຈຳຄະນະກຳມະການສູນກາງແນວລາວສ້າງຊາດ ແລະ ຮອງປະທານສູນກາງແນວລາວສ້າງຊາດບໍ່ປະຈຳການ ແຕ່ໃນກົດໝາຍວ່າດ້ວຍ ແນວລາວສ້າງຊາດ ສະບັບປັບປຸງ ໄດ້ກຳນົດໂຄງປະກອບບຸກຄະລາກອນ ຂອງແນວລາວສ້າງຊາດແຕ່ລະຂັ້ນ ດັ່ງນີ້:

**ກ. ສູນກາງແນວລາວສ້າງຊາດ**

1.ກຳມະການແນວລາວສ້າງຊາດ;

2.ຄະນະປະຈຳຄະນະກຳມະການແນວລາວສ້າງຊາດ;

3.ປະທານຄະນະກຳມະການແນວລາວສ້າງຊາດ;

4.ຮອງປະທານຄະນະກຳມະການແນວລາວສ້າງຊາດປະຈຳການ ແລະ ບໍ່ປະຈຳການ.

- ກຳມະການສູນກາງແນວລາວສ້າງຊາດ ໄດ້ຮັບການແຕ່ງຕັ້ງ ແລະ ຮັບຮອງໂດຍກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຂອງແນວລາວສ້າງຊາດ.

- ຄະນະປະຈຳສູນກາງແນວລາວສ້າງຊາດ ໄດ້ຮັບການແຕ່ງຕັ້ງ ແລະ ຮັບຮອງເອົາໂດຍກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຂອງແນວລາວສ້າງຊາດ.

- ປະທານ, ຮອງປະທານ ແລະ ປະທານກວດກາ ສູນກາງແນວລາວສ້າງຊາດ ໄດ້ຮັບການແຕ່ງຕັ້ງ ແລະ ຮັບຮອງເອົາໂດຍກອງປະຊຸມຄັ້ງປະຖົມມະລືກ ຂອງຄະນະກຳມະການສູນກາງແນວລາວສ້າງຊາດ.

- ຮອງປະທານສູນກາງແນວລາວສ້າງຊາດ ບໍ່ປະຈຳການ ໄດ້ຮັບການແຕ່ງຕັ້ງ ຈາກຄະນະເລຂາທິການສູນກາງພັກ ຕາມການສະເໜີ ຂອງຄະນະປະຈຳສູນກາງແນວລາວສ້າງຊາດ ແລ້ວນຳສະເໜີຮັບຮອງໂດຍກອງປະຊຸມສາມັນ ຫຼື ວິສາມັນຄົບຄະນະກຳມະການສູນກາງແນວລາວສ້າງຊາດ.

**ຂ. ແນວລາວສ້າງຊາດແຂວງ, ນະຄອນຫຼວງ ແລະ ເມືອງ, ເທດສະບານ, ນະຄອນ**

1- ແນວລາວສ້າງຊາດແຂວງ-ນະຄອນຫຼວງ ປະກອບດ້ວຍ:

1. ປະທານ 1 ທ່ານ;
2. ຮອງປະທານ 2 ຫາ 3 ທ່ານ;
3. ຄະນະປະຈຳແນວລາວສ້າງຊາດ 5-7 ທ່ານ;
4. ກຳມະການແນວລາວສ້າງຊາດຈຳນວນໜຶ່ງ (ອີງໃສ່ຄວາມເໝາະສົມຂອງແຕ່ລະແຂວງ);
5. ພະນັກງານ-ລັດຖະກອນ 15 ທ່ານ ຂຶ້ນໄປ (ອີງໃສ່ການຂຽນຕຳແໜ່ງງານຕົວຈິງ).

2- ແນວລາວສ້າງຊາດເມືອງ-ນະຄອນ, ເທດສະບານ ປະກອບດ້ວຍ:

1. ປະທານ 1 ທ່ານ;
2. ຮອງປະທານ 1 ຫາ 2 ທ່ານ;
3. ຄະນະປະຈຳແນວລາວສ້າງຊາດ 3-5 ທ່ານ;
4. ກຳມະການແນວລາວສ້າງຊາດຈຳນວນໜຶ່ງ (ອີງໃສ່ຄວາມເໝາະສົມຂອງແຕ່ລະເມືອງ);
5. ພະນັກງານ-ລັດຖະກອນ 9 ທ່ານຂຶ້ນໄປ (ອີງໃສ່ການຂຽນຕຳແໜ່ງງານຕົວຈິງ).

3- ແນວລາວສ້າງຊາດບ້ານ ປະກອບດ້ວຍ:

1. ປະທານ 1 ທ່ານ;
2. ຮອງປະທານ 2 ຫາ 3 ທ່ານ;

3. ກຳມະການຈຳນວນໜຶ່ງ (ອີງໃສ່ຄວາມເໝາະສົມຂອງແຕ່ລະໜ່ວຍ)

- ປະທານ, ຮອງປະທານ ແລະ ຄະນະກຳມະການແນວລາວສ້າງຊາດ ແຂວງ, ນະຄອນຫຼວງວຽງຈັນ ແລະ ເມືອງ, ເທດສະບານ, ນະຄອນ ແມ່ນກອງປະຊຸມໃຫຍ່ ຫຼື ກອງປະຊຸມສາມັນ ຫຼື ວິສາມັນຂອງແນວລາວສ້າງຊາດ ເປັນຜູ້ປຶກສາຫາລື ສະເໜີແຕ່ງຕັ້ງ ດ້ວຍການລົງປະຊາມະຕິຮັບຮອງເອົາໂດຍການຊີ້ນຳຈາກຄະນະປະຈຳພັກແຂວງ, ນະຄອນຫຼວງ ແລະ ເມືອງ, ເທດສະບານ, ນະຄອນ ແລະ ຫ້າມແຕ່ງຕັ້ງ ກ່ອນການຮັບຮອງເປັນກຳມະການແນວລາວສ້າງຊາດຂັ້ນນັ້ນ.

- ຈຳນວນພະນັກງານ-ລັດຖະກອນຂັ້ນຂະແໜງ ແລະ ວິຊາການ ຂອງແນວລາວສ້າງຊາດແຂວງ-ນະຄອນຫຼວງ, ເມືອງ-ນະຄອນ, ເທດສະບານ ແມ່ນໃຫ້ອີງໃສ່ການຂຽນຕຳແໜ່ງງານຕົວຈິງ. ສຳລັບຈຳນວນກຳມະການແນວລາວສ້າງຊາດແຕ່ລະຂັ້ນ ໃຫ້ອີງໃສ່ສະພາບ ຈຸດພິເສດຕົວຈິງ ຂອງແຂວງ-ນະຄອນຫຼວງ, ເມືອງ-ນະຄອນ, ເທດສະບານ ແລະ ບ້ານ, ເຊິ່ງໂຄງປະກອບບຸກຄະລາກອນຂອງກຳມະການແນວລາວສ້າງຊາດແຕ່ລະຂັ້ນ ໃຫ້ປະກອບມີທັງສະມາຊິກພັກ ແລະ ມະຫາຊົນ, ອົງການພາຄີ, ຕົວແທນຊົນເຜົ່າ, ເພດຍິງ, ຜູ້ຊົງຄຸນວຸດທິ, ຊັ້ນຄົນ, ນັກທຸລະກິດ, ສາສະໜາ, ການຈັດຕັ້ງສັງຄົມ, ສະມາຄົມ, ມູນນິທິ. ແນວລາວສ້າງຊາດຂັ້ນບ້ານ ໃຫ້ມີບ່ອນເຮັດວຽກເປັນຂອງຕົນເອງ ສັງກັດຢູ່ຫ້ອງການປົກຄອງບ້ານຄືກັນກັບອົງການຈັດຕັ້ງອື່ນ ຂອງອົງການປົກຄອງບ້ານ.

### 1.3. ມາດຕາ 13 ເງື່ອນໄຂຂອງກຳມະການແນວລາວສ້າງຊາດ ແລະ ການເຂົ້າເປັນພາຄີຂອງແນວ ລາວສ້າງຊາດ ມີດັ່ງລຸ່ມນີ້:

1. ເປັນພົນລະເມືອງລາວ ແລະ ຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ;

2. ມີນ້ຳໃຈຮັກຊາດ, ມີບົດບາດ, ໄດ້ຮັບຄວາມເຊື່ອໝັ້ນຈາກປະຊາຊົນບ່ອນຕົນດຳລົງຊີວິດ ແລະ ອົງການທີ່ກ່ຽວຂ້ອງ;

3. ມີຄວາມຕື່ນຕົວ, ສະໝັກໃຈ, ເປັນແບບຢ່າງທີ່ດີໃນການປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບຂອງແນວລາວສ້າງຊາດ;

4. ມີຄວາມສາມາດເຕົ້າໂຮມຄວາມສາມັກຄີປອງດອງ ແລະ ສຶກສາອົບຮົມປະຊາຊົນລາວບັນດາເຜົ່າ;

5. ມີການສຶກສາ ຫຼື ວິຊາສະເພາະໃນລະດັບໃດໜຶ່ງ;

6. ມີສຸຂະພາບດີ.

**ຕົວຢ່າງ:** ທ່ານ ກ ເປັນຄົນເຊື້ອຊາດລາວທີ່ດຳລົງຊີວິດຢູ່ຕ່າງປະເທດ ໄດ້ຮັບເລືອກເປັນກຳມະການສູນກາງແນວລາວສ້າງຊາດ ຍ້ອນເຫັນວ່າຜູ້ກ່ຽວມີ 6 ມາດຕະຖານເງື່ອນໄຂຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### 1.4. ມາດຕາ 17 ຄະນະປະຈຳ ຄະນະກຳມະການແນວລາວສ້າງຊາດ

ຄະນະປະຈຳຄະນະກຳມະການສູນກາງແນວລາວສ້າງຊາດ ແມ່ນການຈັດຕັ້ງທີ່ປະຈຳການ ຂອງແນວລາວສ້າງຊາດ ຊຶ່ງເຮັດພາລະບົດບາດ ແລະ ໜ້າທີ່ແທນຄະນະກຳມະການແນວລາວສ້າງຊາດ ໃນໄລຍະທີ່ບໍ່ເປີດກອງປະຊຸມສາມັນປະຈຳປີ.

ຄະນະປະຈຳ ຄະນະກຳມະການແນວລາວສ້າງຊາດ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ມີປະທານ, ບັນດາຮອງປະທານ ແລະ ກຳມະການຄະນະປະຈຳແນວລາວສ້າງຊາດ.

**ຕົວຢ່າງ:** ທ່ານ ກ ເປັນຫົວໜ້າຫ້ອງການ ຫຼື ຫົວໜ້າກົມໃດໜຶ່ງ ຢູ່ສູນກາງແນວລາວສ້າງຊາດ ຜູ້ກ່ຽວເປັນກຳມະການສູນກາງແນວລາວສ້າງຊາດ ແມ່ນມີສິດຮັບເລືອກ ເປັນຄະນະປະຈຳ ຄະນະກຳມະການສູນກາງແນວລາວ

ສ້າງຊາດ. ຖ້າບໍ່ເປັນກຳມະການສູນກາງແນວລາວສ້າງຊາດ ຜູ້ກ່ຽວກໍບໍ່ມີສິດຮັບເລືອກເປັນຄະນະປະຈຳສູນກາງແນວລາວສ້າງຊາດ.

**1.5. ມາດຕາ 19 ການສິ້ນສຸດການເປັນກຳມະການແນວລາວສ້າງຊາດ**

ການເປັນກຳມະການແນວລາວສ້າງຊາດ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ໝົດສະໄໝກອງປະຊຸມໃຫຍ່;
2. ໝົດສັດຈາກການເປັນຕົວແທນ;
3. ຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານການກະທຳຜິດໂດຍເຈດຕະນາ;
4. ຖືກປົດ;
5. ລາອອກ;
6. ເສຍຊີວິດ.

**ຕົວຢ່າງ1:** ທ່ານ ກ ເມື່ອກ່ອນເຮັດວຽກຢູ່ໃນຂົງເຂດການເມືອງ, ວັດທະນະທຳ ຜູ້ກ່ຽວເປັນກຳມະການສູນກາງແນວລາວສ້າງຊາດ. ຫຼັງຈາກນັ້ນ, ຜູ້ກ່ຽວຖືກສັບຊ້ອນຍົກຍ້າຍໄປຮັບຜິດຊອບຢູ່ຂົງເຂດວຽກງານອື່ນ ເຊັ່ນ: ອົງການຕຸລາການ, ຕຳຫຼວດ ແມ່ນຜູ້ກ່ຽວຈະພົ້ນຈາກການເປັນກຳມະການສູນກາງແນວລາວສ້າງຊາດ. ຍົກເວັ້ນຜູ້ກ່ຽວເປັນຕົວແທນເຜົ່າ, ສາສະໜາ ແລະ ຊັ້ນຄົນຕ່າງໆ.

**ຕົວຢ່າງ 2:** ທ່ານ ຂ ເມື່ອກ່ອນຮັບຜິດຊອບເປັນຫົວໜ້າອົງການຈັດຕັ້ງພາຄີ, ເປັນກຳມະການສູນກາງແນວລາວສ້າງຊາດ ແຕ່ຍ້ອນຂັ້ນເທິງແຕ່ງຕັ້ງສັບຊ້ອນ, ຍົກຍ້າຍໄປຮັບໜ້າທີ່ໃນຂົງເຂດການເມືອງ, ວັດທະນະທຳ ຫຼື ຂົງເຂດອື່ນ ແມ່ນຜູ້ກ່ຽວຈະພົ້ນຈາກການເປັນກຳມະການສູນກາງແນວລາວສ້າງຊາດ.

**ຕົວຢ່າງ 3:** ທ່ານ ຄ ເປັນກຳມະການແນວລາວສ້າງຊາດ ແຂວງໃດໜຶ່ງ ພາຍຫຼັງໝົດສະໄໝກອງປະຊຸມໃຫຍ່ຜູ້ແທນແນວລາວສ້າງຊາດແຂວງນັ້ນ ຜູ້ກ່ຽວກໍຈະພົ້ນຈາກການເປັນກຳມະການແນວລາວສ້າງຊາດ ຂອງແຂວງນັ້ນ.

**2. ພາກທີ III ພາຄີ ຂອງແນວລາວສ້າງຊາດ**

ພາຄີ ຂອງແນວລາວສ້າງຊາດ ມີທັງພາຄີ ທີ່ເປັນການຈັດຕັ້ງ ແລະ ພາຄີທີ່ເປັນບຸກຄົນ ຊຶ່ງເປັນຕົວແທນໃຫ້ແກ່ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ຊຶ່ງ ເຄື່ອນໄຫວ ຕາມກົດລະບຽບ ຂອງແນວລາວສ້າງ ຊາດ. ໃນນັ້ນພາຄີທີ່ເປັນການຈັດຕັ້ງ ແມ່ນຍັງຮັກສາຄວາມເປັນເອກະລາດ ໃນການເຄື່ອນໄຫວວຽກງານຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງການຈັດຕັ້ງດັ່ງກ່າວ.

**2.1. ມາດຕາ 21 ການຈັດຕັ້ງທີ່ເປັນພາຄີ ຂອງແນວລາວສ້າງຊາດ**

ການຈັດຕັ້ງທີ່ເປັນພາຄີ ຂອງ ແນວລາວສ້າງຊາດ ແມ່ນອົງການຈັດຕັ້ງການເມືອງ, ອົງການຈັດຕັ້ງການເມືອງ-ສັງຄົມ ແລະ ອົງການຈັດຕັ້ງສັງຄົມ ຢູ່ ສປປ ລາວ ທີ່ສ້າງຕັ້ງຂຶ້ນຖືກຕ້ອງຕາມກົດໝາຍ.

**ຕົວຢ່າງ:** ອົງການຈັດຕັ້ງການເມືອງ ແມ່ນພັກປະຊາຊົນປະຕິວັດລາວ; ອົງການຈັດຕັ້ງການເມືອງ-ສັງຄົມ ແມ່ນສະຫະພັນກຳມະບານລາວ, ຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນແມ່ຍິງລາວ ແລະ ສະຫະພັນນັກຮົບເກົ່າລາວ; ອົງການຈັດຕັ້ງສັງຄົມ ແມ່ນສະຫະພັນ, ສະມາຄົມ, ມູນນິທິ, ສະໂມສອນ ແລະ ອື່ນໆ.

**2.2. ມາດຕາ 22 ບຸກຄົນ ທີ່ເປັນພາຄີຂອງແນວລາວສ້າງຊາດ**

ບຸກຄົນ ທີ່ເປັນພາຄີຂອງແນວລາວສ້າງຊາດ ແມ່ນບຸກຄົນທີ່ເປັນຕົວແທນໃຫ້ແກ່ຊົນຊັ້ນ, ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງຄົນເຊື້ອຊາດລາວທີ່ດຳລົງຊີວິດຢູ່ຕ່າງປະເທດ ບົນພື້ນຖານຄວາມຕື່ນຕົວສະໝັກໃຈ.

3. **ພາກທີ IV ການເຕົ້າໂຮມ ແລະ ສ້າງຄວາມສາມັກຄີ**

**3.1. ມາດຕາ 24 ການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງ**

- ຄວາມສາມັກຄີ ແມ່ນການສະແດງຄວາມຜູກພັນ, ການສຳພັນ, ຄວາມຮັກແພງ, ການຮ່ວມມືຊ່ວຍເຫຼືອອຸ້ມຊູເຊິ່ງກັນ ແລະ ກັນ, ຄວາມໄວ້ເນື້ອເຊື່ອໃຈກັນ, ການເຄົາລົບນັບຖື, ໃຫ້ກຽດ ແລະ ຈິງໃຈຕໍ່ກັນລະຫວ່າງຄົນໃນສັງຄົມ ກໍຄືໃນຊາດ. ຄວາມສາມັກຄີ ຍັງແມ່ນຄວາມເປັນເອກະພາບບົນພື້ນຖານແນວທາງ ຂອງ ພັກ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ຂອງ ລັດ.

- ຄວາມປອງດອງ ແມ່ນຄວາມສະເໝີພາບ ຕໍ່ໜ້າກົດໝາຍ, ຄວາມຍຸຕິທຳ, ການເຄົາລົບນັບຖື, ຜ່ອນສັ້ນ-ຜ່ອນຍາວ, ເຫັນອົກເຫັນໃຈກັນ, ຮັກແພງກັນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນສາຍພົວພັນຄອບຄົວ, ຍາດຕິພີ່ນ້ອງ, ເພື່ອນມິດສະຫາຍ ເຮັດໃຫ້ຄອບຄົວ ແລະ ສັງຄົມມີຄວາມສະຫງົບສຸກ.

ການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງ ກ່ອນອື່ນໝົດ ແມ່ນການສ້າງຄວາມສາມັກຄີລະຫວ່າງເຜົ່າ, ຊັ້ນຄົນ, ສາສະໜາ ແລະ ເພດໄວ ໃຫ້ກາຍເປັນປຶກແຜ່ນແໜ້ນໜາອ້ອມຂ້າງພັກປະຊາຊົນປະຕິວັດລາວ ນັບທັງຄົນເຊື້ອຊາດລາວທີ່ດຳລົງຊີວິດຢູ່ຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນຕ່າງປະເທດທີ່ດຳລົງຊີວິດຢູ່ ສປປ ລາວ; ເດັດດ່ຽວສະ ກັດກັ້ນ ແລະ ຕິຖອຍຖ້ອຍທຳນອງ ແລະ ການເຄື່ອນໄຫວແບ່ງແຍກຄວາມສາມັກຄີພາຍໃນເຜົ່າຕ່າງໆ ແລະ ຄວາມ ສາມັກຄີລະຫວ່າງເຜົ່າ, ສາສະໜາ ທີ່ພວກອິດທິກຳລັງປັ່ນປ່ວນກໍ່ຂຶ້ນນັ້ນ ຢ່າງທັນການ.

ຄົນເຊື້ອຊາດລາວຢູ່ຕ່າງປະເທດ ແມ່ນຄົນທີ່ເກີດຢູ່ດິນແດນລາວ ແລະ ເຄີຍຖືສັນຊາດລາວມາກ່ອນ ທີ່ໄປອາໄສຢູ່ຕ່າງປະເທດ ພ້ອມດ້ວຍລູກ ແລະ ຫຼານຂອງເຂົາເຈົ້າ. ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ແມ່ນພາກສ່ວນໜຶ່ງທີ່ສຳຄັນຊຶ່ງບໍ່ຕັດແຍກອອກຈາກວົງຄະນະຍາດແຫ່ງຊາດລາວໄດ້, ເປັນກຳລັງແຮງອັນໜຶ່ງ ໃນການສ້າງສາພັດທະນາປະເທດຊາດ, ເປັນປັດໄຈສຳຄັນໃນການເປີດກວ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສປປ ລາວ ກັບ ບັນດາປະເທດທີ່ເຂົາເຈົ້າອາໄສຢູ່ ແລະ ອົງການຈັດຕັ້ງສາກົນ.

**3.2. ມາດຕາ 25 ວິທີການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງ**

ການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງປະຊາຊົນລາວບັນດາເຜົ່າ ໃຫ້ປະຕິບັດຜ່ານ 5 ວິທີ ຄື:

1. ໂຄສະນາ, ປຸກລະດົມ ແລະ ຂົນຂວາຍປະຊາຊົນລາວບັນດາເຜົ່າ ເສີມຂະຫຍາຍມູນເຊື້ອຮັກຊາດ, ສາມັກ ຄີປອງດອງທົ່ວປວງຊົນ, ປະກອບສ່ວນເຂົ້າໃນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ.

ການດຳເນີນວຽກງານການເມືອງ-ແນວຄິດ ຕ້ອງຄຽງຄູ່ກັບການປະຕິບັດນະໂຍບາຍຕໍ່ບັນດາຊົນເຜົ່າ ແລະ ຜູ້ຊົງຄຸນວຸດທິຢ່າງຖືກຕ້ອງ. ບ່ອນໃດມີການກະທຳທີ່ຜິດຕໍ່ແນວທາງຂອງພັກ ແລະ ນະໂຍບາຍ ຂອງ ລັດ ກ່ຽວກັບຊົນເຜົ່າ ອົງການທີ່ມີສິດອຳນາດຕ້ອງເດັດດ່ຽວແກ້ໄຂຢ່າງທັນການ ແລະ ບໍ່ປ່ອຍໃຫ້ເຫດການຕ່າງໆແກ່ຍາວກາຍເປັນຊ່ອງວ່າງໃຫ້ກຸ່ມຄົນບໍ່ຫວັງດີສວຍໃຊ້.

ການສຶກສາອົບຮົມ, ປຸກລະດົມປະຊາຊົນລາວບັນດາເຜົ່າ ເຂົ້າສັງກັດໃນອົງການຈັດຕັ້ງໃດໜຶ່ງ ຂອງ ບ້ານ ຕ້ອງເຮັດ ແລະ ດຳເນີນຊີວິດການເມືອງຢ່າງເປັນປົກກະຕິ; ເອົາໃຈໃສ່ເປີດແຜ່ກົນອຸບາຍຂອງກຸ່ມຄົນບໍ່ດີ ທີ່ຫວັງ

ມ້າງເພທຳລາຍຄວາມສາມັກຄີພາຍໃນຊາດ ກໍຄືບັນດາເຜົ່າທີ່ດຳລົງຊີວິດເລື່ອນລອຍໃຫ້ຕື່ນຕົວສະໝັກໃຈເຂົ້າຮ່ວມການສ້າງສາພັດທະນາ ແລະ ແກ້ໄຂຄວາມທຸກຍາກ. ການປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ນັກທຸລະກິດທີ່ເຄື່ອນໄຫວປະຕິບັດໜ້າທີ່ການເມືອງຢູ່ເຂດພູດອຍ, ຊົນນະບົດ, ຫ່າງໄກສອກຫຼີກ ແລະ ບ່ອນອື່ນໆກໍຕ້ອງດຳເນີນໃຫ້ເໝາະສົມ.

2. ເປັນແບບຢ່າງທີ່ດີ, ເປັນຜູ້ນຳໜ້າໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ກົດລະບຽບ ຂອງແນວລາວສ້າງຊາດ.

ພົນລະເມືອງລາວທຸກຄົນ ໂດຍສະເພາະພະນັກງານທີ່ເປັນສະມາຊິກພັກ, ເປັນມະຫາຊົນ ທີ່ສັງກັດຢູ່ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ຕ້ອງເປັນແບບຢ່າງນຳໜ້າປະຊາຊົນລາວບັນດາເຜົ່າທົ່ວໄປ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ, ຫຼີກເວັ້ນປາກົດການສໍ້ລາດບັງຫຼວງ, ສໍ້ຫຼວງບັງລາດ, ດຳລົງຊີວິດປອດໃສຂາວສະອາດ, ບໍ່ປະຕິບັດຕົວເອງເໜືອກົດໝາຍ, ສູງກວ່າປະຊາ ຊົນ, ເຮັດທຸກສິ່ງທຸກຢ່າງເພື່ອປະຊາຊົນ ໃນນັ້ນຮັບປະກັນ 3 ຜົນປະໂຫຍດຄື ຊາດ, ການຈັດຕັ້ງ ແລະບຸກຄົນ ໂດຍຖືເອົາຜົນປະໂຫຍດລວມຂອງຊາດເປັນຫຼັກ.

3. ເຄື່ອນໄຫວ ຫຼາຍຮູບ ຫຼາຍສີ ພ້ອມທັງ ຊຸກຍູ້ຂະບວນການ ສ້າງບ້ານສາມັກຄີ ໂດຍສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ ໃນແຕ່ລະໄລຍະ.

ການສ້າງຄວາມສາມັກຄີປອງດອງ ຕ້ອງຕິດພັນກັບການນຳເອົາຜົນປະໂຫຍດຕົວຈິງມາໃຫ້ປະຊາຊົນລາວບັນດາເຜົ່າ ທາງດ້ານວັດຖຸ ແລະ ຈິດໃຈ. ດ້ວຍເຫດນັ້ນການສ້າງກອງທຶນພັດທະນາຂັ້ນບ້ານ, ຄອບຄົວ ແລະ ບ້ານສາມັກຄີ ຈຶ່ງແມ່ນຮູບການໜຶ່ງ ທີ່ເປັນໃຈກາງແຫ່ງການເຕົ້າໂຮມຄວາມສາມັກຄີ ທັງແມ່ນການປຸກລະດົມຂົນຂວາຍກຳລັງແຮງຂອງປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມປະຕິບັດ 2 ໜ້າທີ່ຍຸດທະສາດ ຄື ປົກປັກ ຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ຮັດແໜ້ນຄວາມສາມັກຄີ, ຄວາມເປັນເອກະພາບ ລະຫວ່າງຊົນ ເຜົ່າ, ສາສະໜາ ແລະເພດ ໄວ ໂດຍເລີ່ມຈາກຄອບຄົວ ແລະ ຮາກຖານ ໃຫ້ກາຍເປັນປັດໄຈສຳຄັນໃນການ ເສີມສ້າງສະຖຽນລະພາບ, ຄວາມສະຫງົບ ແລະ ຄວາມໝັ້ນຄົງເຂັ້ມແຂງຂອງຊາດ.

4. ພົວພັນຮ່ວມມື ກັບການຈັດຕັ້ງ ຂອງພັກ ແລະ ລັດ ເພື່ອສ້າງກ້ອນກຳລັງສາມັກຄີປອງດອງທົ່ວປວງຊົນເຂົ້າຮ່ວມການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ.

ເພື່ອສ້າງກ້ອນກຳລັງສາມັກຄີປອງດອງທົ່ວປວງຊົນນັ້ນ ແນວລາວສ້າງຊາດແຕ່ລະຂັ້ນ ຕ້ອງຍົກສູງບົດບາດການນຳພາ ຂອງພັກ, ສ່ອງແສງສະພາບຄວາມເປັນຈິງ ໃຫ້ພັກ ແລະ ປະກອບສ່ວນໃນການບຸລະນະແນວທາງ ຂອງພັກ ແລະ ນະໂຍບາຍຂອງລັດ ໃຫ້ສອດຄ່ອງກັບສະພາບການໃນແຕ່ລະໄລຍະ, ເຕົ້າໂຮມສຶກສາອົບຮົມມະຫາຊົນໃຫ້ຊາບຊຶ້ງແນວທາງຂອງພັກ ແລະ ໄປນຳພັກ ຢ່າງສຸດກົກສຸດປາຍ.

ແນວລາວສ້າງຊາດ ແຕ່ລະຂັ້ນ ພົວພັນກັບອົງການບໍລິຫານລັດຂັ້ນຕ່າງໆ ໃນການສຶກສາອົບຮົມປະຊາຊົນໃຫ້ມີສະຕິກົດໝາຍ, ເຂົ້າຮ່ວມໃນການປັບປຸງກໍ່ສ້າງກົງຈັກການປົກຄອງ ແລະ ສ້າງນິຕິກຳຕ່າງໆ ໃຫ້ເຂັ້ມແຂງ ເຮັດໃຫ້ການຄຸ້ມຄອງສັງຄົມ ດ້ວຍກົດໝາຍມີຄວາມສັກສິດ, ນອກນັ້ນ, ແນວລາວສ້າງຊາດແຕ່ລະຂັ້ນ ຍັງຕ້ອງຊ່ວຍອົງການປົກຄອງໄກ່ເກ່ຍບັນຫາຕ່າງໆທີ່ເກີດຂຶ້ນໃນສັງຄົມ.

5. ຊາວຢູ່ ຄົນເຊື້ອຊາດລາວທີ່ດຳລົງຊີວິດຢູ່ຕ່າງປະເທດ ສາມັກຄີຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ເຄົາລົບ ແລະ ປະຕິບັດກົດໝາຍ ຂອງປະເທດທີ່ຕົນອາໄສຢູ່, ປະກອບສ່ວນສະຕິປັນຍາ ແລະ ທຶນຮອນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕົນ.

ການເຕົ້າໂຮມຄົນລາວຢູ່ຕ່າງປະເທດ ແມ່ນການສຶກສາອົບຮົມເຂົາເຈົ້າມີຄວາມເຂົ້າໃຈສະພາບຕົວຈິງ ຂອງປະເທດຊາດ ມີຄວາມຜູກພັນ ແລະ ອ່ວຍໜ້າມາຫາປະເທດຊາດ ໂດຍສະເພາະ ແມ່ນຄົນຮຸ່ນໃໝ່ທີ່ຍັງຂາດຈິດສຳນຶກກ່ຽວກັບດິນແດນອັນເປັນບ້ານເກີດເມືອງນອນຂອງບັນພະບຸລຸດຂອງຕົນ; ການສ້າງກົນໄກອັນຄົບຊຸດ ແລະ ມີນະໂຍບາຍອັນຈະແຈ້ງຕໍ່ເຂົາເຈົ້າ, ມີການໂຄສະນາລະດົມຂົນຂວາຍ ອະທິບາຍຊີ້ແຈງໃຫ້ເຂົາເຈົ້າ ໂດຍຜ່ານຫຼາຍຮູບການ, ສອດຄ່ອງກັບກົດໝາຍ ແລະ ຮີດຄອງປະເພນີຂອງລາວ ພ້ອມທັງໃຫ້ສອດຄ່ອງກັບກົດໝາຍ ແລະ ຮີດຄອງປະເພນີຂອງປະເທດທີ່ເຂົາເຈົ້າອາໄສຢູ່ ແລະ ຂອງສາກົນ.

## 4. ພາກທີ V ການຕິດຕາມກວດກາ ຂອງແນວລາວສ້າງຊາດ

### 4.1. ມາດຕາ 26 ການຕິດຕາມກວດກາ ຂອງແນວລາວສ້າງຊາດ

ການຕິດຕາມກວດກາ ຂອງແນວລາວສ້າງຊາດ ແມ່ນການ ຕິດຕາມ ກວດກາ ຜ່ານຄຳຄິດຄຳເຫັນ, ຄຳສະເໜີ, ການສ່ອງແສງ ເຖິງຄວາມມຸ່ງມາດປາຖະໜາ ຂອງປະຊາຊົນລາວບັນດາເຜົ່າ ກ່ຽວກັບການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

**ຕົວຢ່າງ:** ແນວລາວສ້າງຊາດແຕ່ລະຂັ້ນ ເປັນບ່ອນເກັບກຳເອົາຄຳຄິດຄຳເຫັນ ແລະ ຂໍ້ສະເໜີ ຂອງປະຊາຊົນລາວບັນດາເຜົ່າ ເພື່ອສ່ອງແສງລາຍງານ ຕໍ່ກອງປະຊຸມສະພາແຫ່ງຊາດ ເພື່ອຄົ້ນຄວ້າພິຈາລະນາ ເຊັ່ນ: ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກ ຂອງສະພາດັ່ງກ່າວ; ອົງການຕຸລາການ ແລະ ອົງການໄອຍະການປະຊາຊົນ ໃນການປະຕິບັດພາລະບົດບາດສິດ ແລະ ໜ້າທີ່ ຂອງແຕ່ລະອົງການ; ການນຳໃຊ້ສິດ, ການປະຕິບັດພັນທະ ແລະ ໜ້າທີ່ ຂອງພະນັກງານ-ລັດຖະກອນ, ການເຄື່ອນໄຫວວຽກງານ ຂອງພາຄີແນວລາວສ້າງຊາດ ແລະ ອື່ນໆ ທີ່ພົວພັນເຖິງຄວາມມຸ່ງມາດປາຖະໜາ ຂອງປະຊາຊົນລາວບັນດາເຜົ່າ.

### 4.2. ມາດຕາ 27 ເປົ້າໝາຍການຕິດຕາມກວດກາ ຂອງແນວລາວສ້າງຊາດ

ເປົ້າໝາຍການຕິດຕາມກວດກາ ຂອງແນວລາວສ້າງຊາດ ແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກຂອງສະພາດັ່ງກ່າວ; ການປະຕິບັດໜ້າທີ່ຂອງພະນັກງານອົງການລັດບໍລິຫານ; ອົງການຕຸລາການ ແລະ ອົງການໄອຍະການປະຊາຊົນ; ພະນັກງານ-ລັດຖະກອນ ແລະ ພາຄີ ຂອງ ແນວລາວສ້າງຊາດ.

ນອກຈາກນີ້ຍັງເປັນການຕິດຕາມກວດກາບັນຫາພົ້ນເດັ່ນທີ່ຕິດພັນກັບຜົນປະໂຫຍດອັນຊອບທຳ ຂອງ ປະຊາຊົນ, ການເກັບກຳທາງສຽງທີ່ປະຊາຊົນສົນໃຈ, ການພົບປະຖາມຂໍ້ມູນເບື້ອງຕົ້ນ, ໂທລະສັບສາຍດ່ວນ, ຮັບຄຳຮ້ອງທຸກ, ການລົງເກັບກຳຂໍ້ມູນຕົວຈິງ ທັງເປີດເຜີຍ ແລະ ປິດລັບ; ການແກ້ໄຂຂໍ້ຂັດແຍ່ງຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ.

**ຕົວຢ່າງ:** ເປົ້າໝາຍຜູ້ທີ່ຈະຮັບສະໝັກເປັນສະມາຊິກສະພາແຫ່ງຊາດ ຢູ່ໃນເຂດເລືອກຕັ້ງໃດໜຶ່ງ ຖ້າເຫັນວ່າມີທາງສຽງບໍ່ດີ ຈາກການສ່ອງແສງ, ລາຍງານ ຂອງປະຊາຊົນລາວບັນດາເຜົ່າຢູ່ໃນເຂດບ້ານ, ທ້ອງຖິ່ນ ຂອງຕົນ ມີຄຳຄິດຄຳເຫັນ ແລະ ຄຳສະເໜີ ຕໍ່ແນວລາວສ້າງຊາດ ແມ່ນແນວລາວສ້າງຊາດ ຈະລົງໄປ ຕິດຕາມ ກວດກາ ເບິ່ງສະ

ພາບຄວາມເປັນຈິງໂດຍລວມ. ຖ້າຫາກເຫັນບຸກຄົນດັ່ງກ່າວ ມີຫາງສຽງທີ່ບໍ່ດີແທ້ ແມ່ນແນວລາວສ້າງຊາດ ຈະນຳໄປສະເໜີຕໍ່ອົງການກ່ຽວຂ້ອງ ເພື່ອຄົ້ນຄວ້າພິຈາລະນາຕໍ່ບຸກຄົນດັ່ງກ່າວ.

**4.3. ມາດຕາ 28 ເນື້ອໃນການຕິດຕາມກວດກາ ຂອງແນວລາວສ້າງຊາດ**

**ເນື້ອໃນການຕິດຕາມກວດກາ ຂອງແນວລາວສ້າງຊາດ ມີດັ່ງນີ້:**

1. ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນ ແຂວງ ແລະ ສະມາຊິກ ຂອງສະພາດັ່ງກ່າວ

ການຕິດຕາມ, ກວດກາ, ຕີລາຄາ ແລະ ປະເມີນຜົນການຈັດຕັ້ງປະຕິບັດບັດຄຳແນະນຳການລົງພົບປະຜູ້ມີສິດເລືອກຕັ້ງຂອງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ການຕ້ອນຮັບປະຊາຊົນ ທີ່ມາພົວພັນວຽກງານກັບຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ.

ແນວລາວສ້າງຊາດແຕ່ລະຂັ້ນ ແລະ ກຳມະການທີ່ກ່ຽວຂ້ອງ ຕິດຕາມ, ເກັບກຳຄຳສະເໜີ, ຫາງສຽງຂອງປະ ຊາຊົນຕໍ່ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

2. ການປະຕິບັດກົດໝາຍ ຂອງອົງການລັດບໍລິຫານທີ່ພົວພັນເຖິງສິດ ແລະ ພັນທະພື້ນຖານ ຂອງພົນລະເມືອງ

ມີ 13 ສິດ ແລະ 3 ພັນທະພື້ນຖານ ຂອງພົນລະເມືອງ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ສະບັບປັບປຸງ ປີ 2015 ເຊິ່ງອົງການລັດບໍລິຫານ ນຳມາຜັນຂະຫຍາຍເປັນກົດໝາຍນັ້ນ ແນວລາວສ້າງຊາດແຕ່ລະຂັ້ນ ນຳເອົາສິດ ແລະ ພັນທະດັ່ງກ່າວມາເປັນເນື້ອໃນຕິດຕາມກວດກາ ໂດຍຜ່ານການສ່ອງແສງ, ແລກປ່ຽນຄຳ ຄິດເຫັນ ແລະ ຄຳສະເໜີ ຂອງພົນລະເມືອງ, ນອກຈາກນີ້ ຍັງຕ້ອງໄດ້ປະສານສົມທົບກັບອົງການບໍລິຫານລັດ ຈັດຕັ້ງການໂຄສະນາເຜີຍແຜ່ກົດໝາຍໃຫ້ພົນລະເມືອງຢູ່ຂັ້ນຮາກຖານ; ຕິດຕາມກວດກາການປະຕິບັດປະຊາທິປະໄຕຢູ່ຂັ້ນຮາກຖານ ເພື່ອຮັບປະກັນໃຫ້ປະຊາຊົນຮູ້, ປະຊາຊົນ ປຶກສາຫາລື, ປະຊາຊົນ ປະຕິບັດ ແລະ ປະຊາຊົນ ຕິດຕາມກວດກາ.

3. ການດຳເນີນຄະດີ ຂອງອົງການຕຸລາການ ແລະ ອົງການໄອຍະການປະຊາຊົນ

ຄະນະກວດກາ ຂອງແນວລາວສ້າງຊາດ ແຕ່ລະຂັ້ນ ນຳໃຊ້ສິດຕິດຕາມກວດກາ ການແກ້ໄຂຄຳຮ້ອງ ຟ້ອງກໍຄືການດຳເນີນຄະດີ ຂອງອົງການຕຸລາການ ແລະ ອົງການໄອຍະການປະຊາຊົນ ໂດຍຜ່ານການສ່ອງແສງລາຍງານຂອງກຳມະການແນວລາວສ້າງຊາດແຕ່ລະຂັ້ນ ຫຼື ຮັບຄຳຮ້ອງທຸກຈາກປະຊາຊົນໂດຍກົງ. ໃນກໍລະນີມີຄວາມຈຳເປັນຄະນະກວດກາ ຂອງແນວລາວສ້າງຊາດ ສາມາດລົງເກັບກຳຂໍ້ມູນຕົວຈິງ ເພື່ອຄົ້ນຄວ້າ ແລ້ວລາຍງານຕໍ່ອົງການຕຸລາການ ແລະ ອົງການໄອຍະການປະຊາຊົນ ຂັ້ນຂອງຕົນ ພິຈາລະນາແກ້ໄຂ.

4. ການນຳໃຊ້ສິດ, ການປະຕິບັດພັນທະ ແລະ ໜ້າທີ່ ຂອງພະນັກງານ-ລັດຖະກອນ

ແນວລາວສ້າງຊາດ ແຕ່ລະຂັ້ນ ເຂົ້າຮ່ວມຕິດຕາມກວດກາ, ປະກອບຄຳຄິດເຫັນໃຫ້ພະນັກງານ-ລັດຖະກອນ, ສະມາຊິກພັກ, ເຂົ້າຮ່ວມວຽກພັກ-ພະນັກງານ ເປັນຕົ້ນ ການແຕ່ງຕັ້ງບຸກຄະລາກອນ, ເປົ້າໝາຍສະໝັກເຂົ້າເປັນຄະນະພັກ ບົນພື້ນຖານການສ່ອງແສງຜ່ານກຳມະການແນວລາວສ້າງຊາດແຕ່ລະຂັ້ນ ຫຼື ຜ່ານການລາຍງານຈາກປະຊາຊົນ ບ້ານບ່ອນທີ່ພະນັກງານ-ລັດຖະກອນ ອາໄສຢູ່.

ເນື້ອໃນຕິດຕາມກວດກາພະນັກງານ-ລັດຖະກອນ ຕົ້ນຕໍ ແມ່ນການເປັນແບບຢ່າງໃນການນຳໃຊ້ສິດ ແລະ ການປະຕິບັດພັນທະຂອງພົນລະເມືອງ, ການປະຕິບັດກົດລະບຽບຂອງພັກ, ກົດໝາຍວ່າດ້ວຍພະນັກງານ-ລັດຖະ

ກອນ ແລະ ກົດໝາຍອື່ນ; ຕິດຕາມກວດກາການນຳໃຊ້ບົດບາດ, ໜ້າທີ່, ຕຳແໜ່ງ ຂອງພະນັກງານ-ລັດຖະກອນ ໃນການເຄື່ອນໄຫວດຳລົງຊີວິດຢູ່ຊຸມຊົນ ບ້ານບ່ອນທີ່ເຂົາເຈົ້າອາໄສຢູ່.

5. ການເຄື່ອນໄຫວວຽກງານ ຂອງພາກ ແນວລາວສ້າງຊາດ

ແນວລາວສ້າງຊາດແຕ່ລະຂັ້ນ ປະສານສົມທົບກັບອົງການຈັດຕັ້ງພາກ ແລະ ຂະແໜງການກ່ຽວຂ້ອງ ຂອງແຕ່ລະຂັ້ນ ໃນການ ຕິດຕາມ ກວດກາ, ເກັບກຳສະພາບການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ມະຕິ, ຄຳສັ່ງ ຂອງພັກ ແລະ ລັດຖະບານ, ກົດໝາຍວ່າດ້ວຍແນວລາວສ້າງຊາດ ແລະ ການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຕາມກົດໝາຍ, ກົດລະບຽບ, ແຜນພັດທະນາວຽກງານແນວລາວສ້າງຊາດ, ມະຕິກອງປະຊຸມໃຫຍ່ຂອງແນວລາວສ້າງຊາດແຕ່ລະຂັ້ນ.

6. ຄຳຮ້ອງທຸກ, ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນລາວບັນດາເຜົ່າ

ແນວລາວສ້າງຊາດ ແຕ່ລະຂັ້ນ ຕິດຕາມກວດກາ, ເກັບກຳຂໍ້ມູນກ່ຽວກັບຄຳຮ້ອງທຸກຂອງປະຊາຊົນ, ເຂົ້າຮ່ວມປະກອບຄຳຄິດເຫັນຕໍ່ການໄກ່ເກ່ຍ, ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ, ເກັບກຳຄຳຄິດຄຳເຫັນ, ຄວາມມຸ່ງມາດປາຖະໜາຂອງປະຊາຊົນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ແລ້ວນຳສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງເພື່ອພິຈາລະນາແກ້ໄຂ.

7. ການແກ້ໄຂຂໍ້ຂັດແຍ່ງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ

ແນວລາວສ້າງຊາດ ແຕ່ລະຂັ້ນ ນຳໃຊ້ສິດຕິດຕາມກວດກາ ດ້ວຍການຮັບເອົາຄຳຮ້ອງ, ຄຳສະເໜີ ຂອງ ພົນລະເມືອງ ເພື່ອຄົ້ນຄວ້າມີຄຳເຫັນ; ປະສານງານກັບພາກສ່ວນທີ່ກ່ຽວຂ້ອງໃນການແກ້ໄຂຄຳຮ້ອງ, ຄຳສະເໜີດັ່ງກ່າວ; ຕິດຕາມກວດກາການປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ແລະ ການດຳເນີນຄະດີ ຂອງ ອົງການທີ່ກ່ຽວຂ້ອງ.

ແນວລາວສ້າງຊາດ ຂັ້ນບ້ານ ເຂົ້າຮ່ວມໄກ່ເກ່ຍຂໍ້ຂັດແຍ່ງຢູ່ຮາກຖານ ທີ່ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ, ການລະເມີດຮີດຄອງປະເພນີອັນດີງາມ ຂອງປະຊາຊົນບັນລາວດາເຜົ່າ, ຊ່ວຍອົງການປົກຄອງບ້ານ ໃນການສຶກສາອົບຮົມ ແລະ ປຸກລະດົມປະຊາຊົນລາວບັນດາເຜົ່າປະສານສົມທົບວຽກງານກັບບັນດາອົງການທີ່ເຄື່ອນໄຫວວຽກງານຍຸຕິທຳຢ່າງແໜັ້ນແຟ້ນເພື່ອປົກປ້ອງຜົນປະໂຫຍດອັນຊອບທຳ ຂອງປະຊາຊົນພາຍໃນບ້ານ.

**5. ພາກທີ VIII ຂໍ້ຫ້າມ**

**ມາດຕາ 40 ຂໍ້ຫ້າມ ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ແຕ່ງຕັ້ງ, ຍົກຍ້າຍ ປະທານ, ຮອງປະທານ ຫຼື ກຳມະການແນວລາວສ້າງຊາດແຕ່ລະຂັ້ນ ໂດຍບໍ່ປະສານສົມທົບກັບແນວລາວສ້າງຊາດ ຂັ້ນຂອງຕົນ ແລະ ຂັ້ນເທິງ; ຫ້າມຂັດຂວາງ, ນາບຂູ່, ໃຊ້ຄວາມຮຸນແຮງ ຕໍ່ຄະນະກຳມະການ ຫຼື ພະນັກງານ-ລັດຖະກອນແນວລາວສ້າງຊາດ ທີ່ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ; ລະເມີດສິດ, ຜົນປະໂຫຍດ, ຍັກຍອກ, ສໍ້ໂກງເອົາຊັບສິນ ຂອງແນວລາວສ້າງຊາດ; ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ຕົວຢ່າງ:** ທ່ານ ກ ເປັນປະທານແນວລາວສ້າງຊາດ ແຕ່ຖືກແຕ່ງຕັ້ງຍົກຍ້າຍຜູ້ກ່ຽວໄປຮັບໜ້າທີ່ອື່ນ ໂດຍບໍ່ໄດ້ມີການປຶກສາຫາລືກັບແນວລາວສ້າງຊາດຂັ້ນນັ້ນ ແລະ ຂັ້ນເທິງທັດນັ້ນ ແມ່ນຜິດຕໍ່ກົດລະບຽບ ແລະ ກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບເລກທີ 49/ສພຊ, ລົງວັນທີ 20 ມິຖຸນາ 2018.

6. **ພາກທີ X ລະບອບ, ແບບແຜນວິທີເຮັດວຽກ**

**6.1. ມາດຕາ 49 ລະບອບວິທີເຮັດວຽກ**

- ຫຼັກການ ການຈັດຕັ້ງ ແລະ ເຄື່ອນໄຫວຂອງແນວລາວສ້າງຊາດ ມີຄື:

1. ຕື່ນຕົວ, ສະໝັກໃຈ ສິ່ງຄະນະກໍາມະການແນວລາວສ້າງຊາດ ໃນຂັ້ນດຽວກັນຮັບຮອງເອົາ.

2. ປຶກສາຫາລື ຢ່າງກົງໄປກົງມາ, ມີປະຊາທິປະໄຕ ສົມທົບຫຼັກການລວມສູນປະຊາທິປະໄຕ

3. ປະສານສົມທົບ ແລະ ເປັນເອກະພາບໃນການເຄື່ອນໄຫວບົນພື້ນຖານກົດລະບຽບ ຂອງແນວລາວສ້າງຊາດ ແລະ ກົດໝາຍວ່າດ້ວຍແນວລາວສ້າງຊາດ.

**6.2. ມາດຕາ 50 ແບບແຜນວິທີເຮັດວຽກ**

ແນວລາວສ້າງຊາດ ເຮັດວຽກຢ່າງມີແຜນການ, ແບ່ງງານ, ແບ່ງຄວາມຮັບຜິດຊອບ, ມີການກວດກາ, ສະຫຼຸບ, ຖອດຖອນບົດຮຽນ, ປະຕິບັດລະບອບລາຍງານ, ປະສານສົມທົບກັບການຈັດຕັ້ງຕ່າງໆ ແລະ ອົງການທີ່ກ່ຽວຂ້ອງ; ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມລະບຽບການ.

**ແບບແຜນວິທີ ເຮັດວຽກ ຂອງແນວລາວສ້າງຊາດ ສະແດງອອກ:**

1. ຄະນະກໍາມະການແນວລາວສ້າງຊາດແຕ່ລະຂັ້ນ

- ປຶກສາຫາລືບັນຫາຢ່າງກົງໄປກົງມາ, ມີປະຊາທິປະໄຕ ເພື່ອຄວາມເປັນເອກະສັນກັນ, ປອງດອງກັນ.

- ບໍ່ໃຊ້ຫຼັກການເອົາສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ ແຕ່ສຽງສ່ວນໜ້ອຍ ຫຼື ບຸກຄົນທີ່ບໍ່ຂັດກັບຜົນປະໂຫຍດຂອງຊາດ, ບໍ່ສ້າງຜົນເສຍຫາຍໃຫ້ປະເທດຊາດ ຈະໄດ້ສະຫງວນໄວ້.

- ຄະນະປະຈໍາ ປະກອບມີປະທານ, ຮອງປະທານ ແລະ ຂັ້ນກົມ (ຂັ້ນສູນກາງ) ຫຼື ຫົວໜ້າຂະແໜງ (ຂັ້ນແຂວງ) ຫຼື ຫົວໜ້າໜ່ວຍງານ (ຂັ້ນເມືອງ) ຈໍານວນໜຶ່ງ ເປັນບ່ອນປະຕິບັດຫຼັກການລວມສູນປະຊາທິປະໄຕ ໃນຄະນະກໍາມະການແນວລາວສ້າງຊາດແຕ່ລະຂັ້ນ.

2. ຄະນະປະຈໍາ, ປະທານ, ຮອງປະທານ

- ຄະນະປະຈໍາ ຈະຕົກລົງມອບຄວາມຮັບຜິດຊອບໃຫ້ປະທານ ຫຼື ຮອງປະທານ ທ່ານໃດໜຶ່ງ ແກ້ໄຂວຽກໃດໜຶ່ງ ຫຼື ປະຕິບັດວຽກໃດວຽກໜຶ່ງ;

- ຄະນະປະຈໍາ ຫຼື ຮອງປະທານ ບໍ່ແມ່ນຜູ້ຊ່ວຍວຽກໃຫ້ປະທານ, ຮອງປະທານເປັນຜູ້ແກ້ໄຂໂດຍກົງຕາມວຽກທີ່ຄະນະປະຈໍາໄດ້ມອບໝາຍໃຫ້.

- ຜູ້ຊ່ວຍວຽກ ຄະນະປະຈໍາ, ປະທານ, ຮອງປະທານ ແມ່ນກົງຈັກ, ເສນາທິການ (ຂັ້ນສູນກາງ ແມ່ນຫ້ອງການ ແລະ ບັນດາກົມ ສ່ວນຂັ້ນແຂວງ ກໍ່ແມ່ນຫ້ອງການ ແລະ ຂະແໜງຕ່າງໆ) ນອກຈາກນີ້ຍັງມີຄະນະທີ່ປຶກສາ ແລະ ຄູ່ຮ່ວມງານວຽກງານແນວລາວສ້າງຊາດ ແລະ ຜູ້ຊົງຄຸນວຸດທິ.

3. ກົງຈັກຊ່ວຍວຽກ ຂອງແນວລາວສ້າງຊາດ

ກົງຈັກການຈັດຕັ້ງດັ່ງກ່າວ ແມ່ນຄະນະປະຈໍາແນວລາວສ້າງຊາດຂັ້ນນັ້ນ ເປັນຜູ້ກໍານົດເຊິ່ງມີບົດບາດ, ສິດ ແລະ ໜ້າທີ່ ໃນການເປັນເສນາທິການຊ່ວຍວຽກງານຕ່າງໆ ເປັນຕົ້ນ ການຫັນເອົາແນວທາງຂອງພັກ, ນະໂຍບາຍຂອງລັດ ມາເປັນແຜນງານ ແລະ ຫັນແຜນງານມາເປັນໂຄງການລະອຽດ ໃນການຈັດຕັ້ງປະຕິບັດໃນແຕ່ລະໄລຍະ.

4. ການເປັນຂົວຕໍ່ລະຫວ່າງພັກ, ລັດ ກັບ ປະຊາຊົນ

- ແນວລາວສ້າງຊາດຕາງໜ້າປະຊາຊົນ, ເປັນຕົວແທນໃຫ້ປະຊາຊົນປະກອບຄຳຄິດຄຳເຫັນ ຕໍ່ການຈັດ ຕັ້ງພັກ-ລັດ, ນຳສະເໜີຄວາມມຸ່ງມາດປາຖະໜາ, ຄວາມຂັດຂ້ອງໝອງໃຈ ຂອງປະຊາຊົນຕໍ່ການປະຕິບັດແນວທາງນະໂຍບາຍ ຂອງພັກ ແລະ ກົດໝາຍລັດ.

- ຫັນລົງຮາກຖານຢ່າງແຂງແຮງ, ສຸມໃສ່ຮາກຖານຢ່າງມີຈຸດສຸມ, ມີແຜນການ, ໂຄງການ (ຕ້ອງກຳແໜ້ນສະພາບປະຊາຊົນບ່ອນນັ້ນ, ຄວາມມຸ່ງມາດປາຖະໜາ, ຄວາມຕ້ອງການຊ່ວຍແກ້ໄຂ ເພື່ອລົງໄປແກ້ໄຂຢ່າງມີປະສິດທິຜົນ).

- ເຮັດວຽກໂຄສະນາຢ່າງເປັນປະຈຳ, ໃຫ້ການແນະນຳ, ຊີ້ນຳ ແລະ ກຳນົດທິດທາງກ່ຽວກັບທາງສຽງສັງຄົມ ໃຫ້ປະຊາຊົນເຂົ້າໃຈຢ່າງຖືກຕ້ອງ ແລະ ທັນການ.

5. ສ້າງຂໍ້ກຳນົດລະບອບ, ລະບຽບການປະສານສົມທົບ

- ຄະນະກຳມະການແນວລາວສ້າງຊາດແຕ່ລະຂັ້ນ ຈະຕ້ອງມີການສ້າງຂໍ້ຕົກລົງ ລະບອບ, ລະບຽບການ, ກົນໄກປະສານສົມທົບລະຫວ່າງ ສູນກາງແນວລາວສ້າງຊາດ ກັບ ສະພາແຫ່ງຊາດ; ສູນກາງແນວລາວ ສ້າງຊາດ ກັບ ລັດຖະບານ; ແນວລາວສ້າງຊາດແຂວງ, ນະຄອນຫຼວງ ກັບ ສະພາປະຊາຊົນຂັ້ນແຂວງ; ແນວລາວສ້າງຊາດ ກັບ ອົງການປົກຄອງທ້ອງຖິ່ນ; ແນວລາວສ້າງຊາດ ກັບ ອົງການພາຄີ ເພື່ອປະຕິບັດວຽກງານຈຳນວນໜຶ່ງຮ່ວມກັນ ພ້ອມທັງມີການວາງແຜນ, ການສະຫຼຸບ ແລະ ຕີລາຄາ ເປັນແຕ່ລະໄລຍະດ້ວຍກັນ.

- ຄະນະກຳມະການແນວລາວສ້າງຊາດແຕ່ລະຂັ້ນ ສາມາດມີຂໍ້ຕົກລົງຮ່ວມມືສະເພາະນຳກະຊວງ, ອົງການ, ອົງການຈັດຕັ້ງສັງຄົມ ແລະ ບໍລິສັດ ໂດຍສະເພາະການຈັດຕັ້ງໂຄງການແກ້ໄຂຄວາມທຸກຍາກ ຂອງ ປະຊາຊົນບັນດາເຜົ່າ, ການແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມ, ວຽກງານສົງເຄາະ ແລະ ອື່ນໆ ບົນພື້ນຖານ ການປະຕິບັດຕາມພາລະບົດບາດ, ໜ້າທີ່ການເມືອງ ຂອງແນວລາວສ້າງຊາດ.

**ຕົວຢ່າງ 1:** ຂໍ້ຕົກລົງ ວ່າດ້ວຍການພົວພັນ ລະຫວ່າງ ຄະນະປະຈຳສະພາແຫ່ງຊາດ ກັບ ຄະນະປະຈຳສູນກາງແນວລາວສ້າງຊາດ.

**ຕົວຢ່າງ 2:** ການລົງນາມຮ່ວມກັນ ລະຫວ່າງ ສູນກາງແນວລາວສ້າງຊາດ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບໂຄງການສ້າງຄວາມເຂັ້ມແຂງໃຫ້ແນວລາວສ້າງຊາດ ໃນການສົ່ງເສີມແລະປົກປ້ອງຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າໃຫ້ມີສ່ວນຮ່ວມໃນການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຍືນຍົງ.

**ຕົວຢ່າງ 3:** ໂຄງການຮ່ວມມື ລະຫວ່າງ ສູນກາງແນວລາວສ້າງຊາດ ແລະ ອົງການອຸຍນິເຊັບ ປະຈຳ ສປປ ລາວ ກ່ຽວກັບການສົ່ງເສີມການສັກຢາກັນພະຍາດ.

**ຕົວຢ່າງ 4:** ໂຄງການຮ່ວມມື ລະຫວ່າງ ສູນກາງແນວລາວສ້າງຊາດ ແລະ ກຸ່ມບໍລິສັດພົງສະຫວັນ ກ່ຽວກັບໂຄງການສ້າງຄວາມສາມັກຄີປອງດອງຕິດພັນກັບການແກ້ໄຂຄວາມທຸກຍາກ ດ້ວຍການຊຸກຍູ້ການຜະລິດກະສິກຳເປັນສິນຄ້າ ແລະ ການບໍລິການ ຢູ່ເມືອງລອງຊານ ແຂວງ ໄຊສົມບູນ.

**6.3. ມາດຕາ 51 ການພົວພັນລະຫວ່າງສູນກາງແນວລາວສ້າງຊາດ ກັບ ສະພາແຫ່ງຊາດ ການພົວພັນສະແດງອອກດັ່ງນີ້:**

ການເຂົ້າຮ່ວມຄົ້ນຄວ້າ, ປະກອບຄຳຄິດເຫັນຕໍ່ການສ້າງ ແລະ ປັບປຸງຮ່າງກົດໝາຍ ຫຼື ຮ່າງນິຕິກຳອື່ນທີ່ພົວພັນກັບວຽກງານຊົນເຜົ່າ, ສາສະໜາ, ຜົນກະທົບຈາກໂຄງການ, ວຽກງານສາມສ້າງ, ວຽກງານກໍ່ສ້າງຮາກຖານ ແລະ ວຽກງານເຂດເລືອກຕັ້ງ;

ການສ້າງແຜນການເຄື່ອນໄຫວ, ປະກອບຄະນະລົງຕິດຕາມ, ກວດກາການຈັດຕັ້ງປະຕິບັດນະໂຍບາຍ,ກົດໝາຍ ແລະ ນິຕິກຳອື່ນກ່ຽວກັບການຍົກຍ້າຍ, ເວນຄືນ ຫຼື ຊົດເຊີຍຈາກໂຄງການ, ຈາກການປະຕິບັດນະໂຍບາຍສາມສ້າງຢູ່ເຂດຊົນນະບົດ, ພູດອຍ, ຫ່າງໄກສອກຫຼີກ;

ຄະນະປະຈຳສະພາແຫ່ງຊາດ, ຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຂັ້ນແຂວງ, ນະຄອນຫຼວງ ສົມທົບກັບຄະນະປະຈຳສູນ ກາງແນວລາວສ້າງຊາດ, ແນວລາວສ້າງຊາດ ຂັ້ນແຂວງ, ນະຄອນຫຼວງ ຄົ້ນຄວ້າມາດຕະຖານເງື່ອນໄຂ ແລະ ໂຄງປະກອບບຸກຄະລາກອນທີ່ຈະອອກສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ກໍຄື ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ນະຄອນຫຼວງ.

### 6.4. ມາດຕາ 52 ການພົວພັນລະຫວ່າງສູນກາງແນວລາວສ້າງຊາດ ກັບ ລັດຖະບານ

**ການພົວພັນສະແດງອອກດັ່ງນີ້:**

ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງລັດຖະບານມີປະສິດທິຜົນນັ້ນ, ລັດຖະບານຕ້ອງປະສານສົມທົບກັບ ສູນກາງແນວລາວສ້າງຊາດ ໃນການປຸກລະດົມປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມການຈັດຕັ້ງປະຕິບັດບັນດາກົດໝາຍ ແລະ ນິຕິກຳອື່ນໆ ຂອງລັດຖະບານ. ປະຊາຊົນລາວບັນດາເຜົ່າ ສາມາດສ່ອງແສງ, ແລກປ່ຽນຄຳຄິດເຫັນ, ຄວາມຂັດຂ້ອງໝອງໃຈ ແລະ ຄຳສະເໜີ ຂອງຕົນ ທີ່ມີຕໍ່ການຈັດຕັ້ງປະຕິບັດການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ຜົນກະທົບຈາກບັນດາໂຄງການລົງທຶນຂອງລັດ, ເອກະຊົນ ແລະ ລັດຮ່ວມທຶນ ໂດຍຜ່ານສູນກາງແນວລາວສ້າງຊາດ ເພື່ອນຳເອົາບັນຫາຕ່າງໆ ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ຂອງລັດຖະບານ ປັບປຸງ ແລະ ແກ້ໄຂທັນສະພາບການ. ໃນກໍລະນີມີຄວາມຈຳເປັນສູນກາງແນວລາວສ້າງຊາດ ຈະເຊື້ອເຊີນຜູ້ຕາງໜ້າລັດຖະບານມາອະທິບາຍຊີ້ແຈງບັນຫາທີ່ພົ້ນເດັ່ນທີ່ປະຊາຊົນ ແລະ ສັງຄົມ ໃຫ້ຄວາມສົນໃຈໃນກອງປະຊຸມສູນກາງແນວລາວສ້າງຊາດ ຈັດຂຶ້ນ ເພື່ອນຳເອົາການຊີ້ແຈງເຫຼົ່ານັ້ນ ໄປອະທິບາຍ, ສຶກສາອົບຮົມໃຫ້ປະຊາຊົນເຂົ້າໃຈ ແລະ ໃຫ້ການປະກອບສ່ວນໃນວຽກງານດັ່ງກ່າວ.

### 6.5 ມາດຕາ 53 ການພົວພັນລະຫວ່າງ ແນວລາວສ້າງຊາດແຂວງ, ນະຄອນຫຼວງ ກັບ ສະພາປະຊາຊົນ ຂັ້ນແຂວງ

**ການພົວພັນສະແດງອອກດັ່ງນີ້:**

ການເຂົ້າຮ່ວມຄົ້ນຄວ້າ, ປະກອບຄຳຄິດເຫັນຕໍ່ການສ້າງ ແລະ ປັບປຸງຮ່າງນິຕິກຳທີ່ສຳຄັນຂັ້ນແຂວງ ທີ່ ພົວພັນກັບວຽກງານຊົນເຜົ່າ, ສາສະໜາ, ຜົນກະທົບຈາກໂຄງການ, ວຽກງານສາມສ້າງ, ວຽກງານກໍ່ສ້າງຮາກຖານ ແລະ ວຽກງານເຂດເລືອກຕັ້ງຂັ້ນແຂວງ;

ການສ້າງແຜນການເຄື່ອນໄຫວ, ປະກອບຄະນະລົງຕິດຕາມ, ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳອື່ນກ່ຽວກັບການຍົກຍ້າຍ, ເວນຄືນ ຫຼື ຊົດເຊີຍຈາກໂຄງການພັດທະນາຕ່າງໆ ຈາກການປະຕິບັດນະໂຍບາຍສາມສ້າງ ແລະ ພັດທະນາຊົນນະບົດແກ້ໄຂຄວາມທຸກຍາກ.

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ ສົມທົບກັບຄະນະກຳມະການແນວລາວສ້າງຊາດແຂວງ, ນະຄອນຫຼວງ ຄົ້ນຄວ້າຜັນຂະຫຍາຍມາດຕະຖານເງື່ອນໄຂ ແລະ ໂຄງປະກອບບຸກຄະລາກອນ ທີ່ຈະອອກສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນ ແຂວງ.

**6.6. ມາດຕາ 54 ການພົວພັນລະຫວ່າງແນວລາວສ້າງຊາດ ກັບ ອົງການປົກຄອງທ້ອງຖິ່ນ ການພົວພັນສະແດງອອກດັ່ງນີ້:**

ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງອົງການປົກຄອງທ້ອງຖິ່ນມີປະສິດທິຜົນນັ້ນ, ອົງການບໍລິຫານລັດຂັ້ນທ້ອງຖິ່ນ ຕ້ອງປະສານສົມທົບກັບຄະນະກຳມະການແນວລາວສ້າງຊາດທ້ອງຖິ່ນ ໃນການປຸກລະດົມປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມການຈັດຕັ້ງປະຕິບັດບັນດາກົດໝາຍ ແລະ ນິຕິກຳຕ່າງໆ ຂອງອົງການບໍລິຫານລັດຂັ້ນທ້ອງຖິ່ນ. ປະຊາຊົນລາວບັນດາເຜົ່າປະຈຳທ້ອງຖິ່ນ ສາມາດສ່ອງແສງ, ແລກປ່ຽນຄຳຄິດເຫັນ, ສະເໜີຄວາມຂັດຂ້ອງໝອງໃຈຂອງຕົນ ທີ່ມີຕໍ່ການຈັດຕັ້ງປະຕິບັດການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ຜົນກະທົບຈາກບັນດາໂຄງການລົງທຶນຂອງລັດ, ເອກະຊົນ ແລະ ລັດຮ່ວມທຶນ ໂດຍຜ່ານແນວລາວສ້າງຊາດທ້ອງຖິ່ນ ເພື່ອນຳເອົາບັນຫາຕ່າງໆໃຫ້ພາກສ່ວນທີ່ກ່ຽວຂ້ອງ ຂອງອົງການບໍລິຫານລັດຂັ້ນທ້ອງຖິ່ນປັບປຸງ ແລະ ແກ້ໄຂທັນສະພາບການ. ໃນກໍລະນີມີຄວາມຈຳເປັນແນວລາວສ້າງຊາດຂັ້ນແຂວງ ຈະເຊື້ອເຊີນຜູ້ຕາງໜ້າຂອງອົງການປົກຄອງທ້ອງຖິ່ນມາອະທິບາຍຊີ້ແຈງບັນຫາທີ່ພົ້ນເດັ່ນທີ່ປະຊາຊົນລາວບັນດາເຜົ່າ ຂອງທ້ອງຖິ່ນນັ້ນສົນໃຈ ໃນກອງປະຊຸມສາມັກຄີບຄະນະປະຈຳປີຂອງແນວລາວສ້າງຊາດທ້ອງຖິ່ນ ເພື່ອນຳເອົາການຊີ້ແຈງເຫຼົ່ານັ້ນ ໄປອະທິບາຍໃຫ້ປະຊາຊົນ ເຂົ້າໃຈ ແລະ ປະກອບສ່ວນໃນວຽກງານດັ່ງກ່າວ.

**6.7. ມາດຕາ 55 ການພົວພັນລະຫວ່າງແນວລາວສ້າງຊາດ ກັບ ພາຄີ ການພົວພັນສະແດງອອກດັ່ງນີ້:**

ແນວລາວສ້າງຊາດ ແລະ ພາຄີ ແຕ່ລະຂັ້ນ ຕ້ອງມີກອງປະຊຸມຮ່ວມກັນເປັນແຕ່ລະໄລຍະ ເພື່ອປຶກສາຫາລືວຽກງານຢ່າງມີປະຊາທິປະໄຕ, ສະເໜີຖາມ, ຕຳນິສິ່ງຂ່າວ, ສະເໜີຄຳຄິດຄຳເຫັນ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ເຊິ່ງກັນ ແລະ ກັນ; ຮ່ວມມືກັນຢ່າງສະເໝີພາບ, ສາມັກຄີຢ່າງຈິງໃຈ ໃນການປະ ກອບສ່ວນສ້າງແຜນນະໂຍບາຍ ແລະ ກົດໝາຍ ຂອງລັດ; ພ້ອມກັນເຂົ້າຮ່ວມ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ພ້ອມທັງການຈັດຕັ້ງປະຕິບັດວຽກງານແນວໂຮມ ຂອງແນວລາວສ້າງຊາດ ແລະ ອົງການພາຄີ; ປະສານສົມທົບ ແລະ ເອກະພາບ ເພື່ອພ້ອມກັນປະຕິບັດໜ້າທີ່ການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ນະໂຍບາຍການຕ່າງປະເທດຂອງພັກ, ລັດ ໂດຍສະເພາະການທູດປະຊາຊົນ.

**6.8. ມາດຕາ 56 ການພົວພັນລະຫວ່າງແນວລາວສ້າງຊາດ ກັບ ປະຊາຊົນ ການພົວພັນສະແດງອອກດັ່ງນີ້:**

ແນວລາວສ້າງຊາດແຕ່ລະຂັ້ນ ຕ້ອງເຕົ້າໂຮມຄວາມສາມັກຄີ, ປຸກລະດົມປະຊາຊົນ ໃຫ້ນຳໃຊ້ສິດ ແລະ ປະຕິບັດພັນທະຂອງພົນລະເມືອງຕາມລັດຖະທຳມະນູນ ແຫ່ງ ສປປ ລາວ ກຳນົດໄວ້, ປຸກລະດົມ ໃຫ້ປະຊາຊົນ ເສີມຂະຫຍາຍສິດເປັນເຈົ້າ ໃນການຈັດຕັ້ງປະຕິບັດແນວຂອງພັກ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍຂອງລັດ ແລະ ກົດໝາຍວ່າດ້ວຍແນວລາວສ້າງຊາດ; ຊຸກຍູ້ໃຫ້ປະຊາຊົນ ປະກອບສ່ວນ ຕິດຕາມ ກວດກາ ການເຄື່ອນໄຫວອົງການຂອງລັດ, ສະມາຊິກສະພາແຫ່ງຊາດ ແລະ ພະນັກງານ-ລັດຖະກອນ; ພ້ອມດຽວກັນນັ້ນ, ແນວລາວສ້າງ

ຊາດ ແຕ່ລະຂັ້ນ ຕ້ອງເກັບກໍາ, ເຕົ້າໂຮມເອົາຄໍາຄຶດຄໍາເຫັນ, ຂໍ້ສະເໜີຂອງປະຊາຊົນ, ຄວາມຂັດຂ້ອງໝອງໃຈ ຂອງປະຊາຊົນ, ການຕໍານິຕິຈານອັນສ້າງສັນຂອງສັງຄົມ ຕໍ່ແນວທາງຂອງພັກ ແລະ ນະໂຍບາຍຂອງລັດ ເພື່ອສະເໜີພາກສ່ວນທີ່ກ່ຽວຂ້ອງ ຂອງພັກ ແລະ ລັດ ພິຈາລະນາແກ້ໄຂ, ເອົາໃຈໃສ່ເບິ່ງແຍງ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງປະຊາຊົນ.

**7. ພາກທີ XI ອັນສ້າງຕັ້ງ, ທຸງ, ກາໝາຍ ແລະ ກາປະທັບ ຂອງແນວລາວສ້າງຊາດ**

**7.1. ມາດຕາ 58 ທຸງ ແລະ ກາໝາຍ ຂອງແນວລາວສ້າງຊາດ**

1. ທຸງ ຂອງແນວລາວສ້າງຊາດ ມີພື້ນເປັນສີແດງ, ມີສັດສ່ວນ 100x70 ຊມ, ເສັ້ນຜ່າກາງ ຂອງກາໝາຍແນວລາວສ້າງຊາດ 60 ຊມ, ກາໝາຍຈະຢູ່ຫ່າງຈາກເບື້ອງເທິງສຸດຂອງທຸງ ຕາມລວງຍາວ10 ຊມ (ຫົວໜ່ວຍວັດແທກ ແມ່ນຊັງຕີແມັດ).

2. ແນວລາວສ້າງຊາດ ມີກາໝາຍເປັນເອກະລັກ ຂອງຕົນຄື ເປັນຮູບວົງມົນແບບດວງຈັນ, ມີທຸງຊາດລາວຕັ້ງຢູ່ດ້ານເທິງສຸດ, ຮູບທາດຫຼວງຕັ້ງຢູ່ກາງ, ຮູບກົງຈັກເຄິ່ງ ວົງມົນຢູ່ກ້ອງທາດຫຼວງ, ຮູບຮວງເຂົ້າຢູ່ ສອງຟາກຂ້າງ, ຮູບປຶ້ມຂຽນ ແລະ ປາກກາປັກນົກ ຢູ່ກ້ອງກົງຈັກດ້ານລຸ່ມ ຂອງຮວງເຂົ້າ ມີຕົວອັກສອນ ຂຽນວ່າ "ແນວລາວສ້າງຊາດ". ກາໝາຍ ຂອງແນວລາວສ້າງຊາດ ແມ່ນສັນຍາລັກແຫ່ງຄວາມສາມັກຄີເປັນເອກະພາບໃນວົງຄະນະຍາດແຫ່ງຊາດ ບົນພື້ນຖານພັນທະພາບກໍາມະກອນ, ຊາວກະສິກອນ ແລະ ຊັ້ນຄົນ, ນັກຮຽນຮູ້ປັນຍາຊົນ ໂດຍແມ່ນພັກປະຊາຊົນປະຕິວັດລາວ ເປັນແກນນໍາ.

**7.2. ມາດຕາ 59 ຕາປະທັບຂອງແນວລາວສ້າງຊາດແຕ່ລະຂັ້ນ**

ແນວລາວສ້າງຊາດແຕ່ລະຂັ້ນ ແມ່ນມີຕາປະທັບຂອງຕົນ ເພື່ອນໍາໃຊ້ເຂົ້າ ໃນການເຄື່ອນໄຫວວຽກງານທາງລັດຖະການ.

**ຕົວຢ່າງ:** ແນວລາວສ້າງຊາດ ມີຕາປະທັບຂອງຕົນເອງ ສາມາດນໍາໃຊ້ຕາປະທັບດັ່ງກ່າວເຂົ້າໃນການເຄື່ອນໄຫວວຽກງານຂອງຕົນເຊັ່ນ: ປະທັບໃສ່ບົດສະຫຼຸບລາຍງານ, ໜັງສືສະເໜີ, ເຂົ້າຮ່ວມການແກ້ໄຂຂໍ້ຂັດແຍ່ງຕ່າງໆ ແລະ ອື່ນໆ ເພື່ອຄວາມສັກສິດໃນການປະຕິບັດໜ້າທີ່ວຽກງານຂອງຕົນ.

**III. ການຈັດຕັ້ງປະຕິບັດ**

1. ມອບໃຫ້ແນວລາວສ້າງຊາດ ແລະ ຄະນະກໍາມະການແນວລາວສ້າງຊາດ ແຕ່ລະຂັ້ນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງໂຄສະນາ, ເຜີຍແຜ່, ແນະນໍາ ແລະ ຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ໃຫ້ໄດ້ຮັບຜົນດີ.

2. ຜ່ານການຈັດຕັ້ງປະຕິບັດຕົວຈິງ ໃນກໍລະນີມີບາງບັນຫາທີ່ບໍ່ໄດ້ກໍານົດໄວ້ໃນຄໍາແນະນໍາສະບັບນີ້ ໃຫ້ສະເໜີສູນກາງແນວລາວສ້າງຊາດ ເພື່ອຄົ້ນຄວ້າ ແລະ ພິຈາລະນາ.

**IV. ຜົນສັກສິດ**

ຄໍາແນະນໍາສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຄະນະກໍາມະການສູນກາງແນວລາວສ້າງຊາດ**

**ປະທານ**

ປອ ໄຊສົມພອນ ພົມວິຫານ